" ການສິດຫຼືຖ່າຍທອດທຳມະຈະເອີ້ນແທ້ກໍ່ຄືບໍ່ແມ່ນການສິດຫຼືຖ່າຍທອດ....ພຽງແຕ່ທ່ານມາບ່ອນນີ້ແລ້ວໃຫ້ຂ້າພະເຈົ້າຊ່ວຍທ່ານໃຫ້ຮູ້ຈັກຊ່ວຍໂຕເອງ.ຂ້າພະເຈົ້າບໍ່ໄດ້ມາບ່ອນນີ້ເພື່ອທຳໃຫ້ທ່ານເປັນລູກສິດ...ຂ້າພະເຈົ້າມາເພື່ອຊ່ວຍທ່ານໃຫ້ກາຍເປັນອາຈານ "

" ທ່ານ ອານຸດຕຣາຈານ ຊີງໄຫ່ "

ທຸກໆທ່ານຮູ້ວິທີການນັ່ງສະມາທິກັນແລ້ວ,ແຕ່ວ່າ ພວກທ່ານນັ່ງສະມາທິກັນ ຫາແຕ່ສິ່ງທີ່ຜິດ.ບາງຄົນນັ່ງສະມາທິຫາແຕ່ຜູ້ຍິງສວຍໆງາມໆ,ບາງຄົນນັ່ງສະມາທິ ຫາແຕ່ເງິນໆທອງໆ,ບາງຄົນກໍ່ນັ່ງເຖິງເລື້ອງທຸລະກິດ ການນັ່ງສະມາທິ ທີ່ແທ້ຈິງກໍ່ຄື ການນັ່ງທີ່ຢຸດນິ້ງ ບໍ່ຄິດຫາສິ່ງອື່ນ ຄິດຫາພຽງແຕ່ສິ່ງດຽວ. ອັນນັ້ນຈຶ່ງຄ່ອຍແມ່ນສະມາທິແທ້.ເວລານັ່ງສະມາທິ,ຂ້າພະເຈົ້າເປັ່ງກະແສຈິດໃສ່ແຕ່ພະລັງພາຍໃນ, ເພື່ອໃຫ້ຄວາມຮັກ,ຄວາມເມດຕາ, ແລະຄວາມເມດຕາປານີອັນສູງສົ່ງ ຂອງພຣະຜູ້ເປັນເຈົ້າ.

" ທ່ານ ອານຸດຕຣາຈານ ຊີງໄຫ່ "

" ການສິດເອົາວິຊາທຳມະ ໝາຍຄວາມວ່າ ການເລີ້ມຕົ້ນຊີວິດໃໝ່ ເທິງເສັ້ນທາງຂອງກິດລະບຽບໃໝ່. ມັນ ໝາຍຄວາມວ່າ ທ່ານອາຈານໄດ້ຕົກລົງຮັບເອົາທ່ານ ໃຫ້ເຂົ້າມາເປັນນຶ່ງຊີວິດ ໃນວົງຈອນຂອງເຫຼົ່ານັກບຸນທັງຫຼາຍ.ນັ້ນ,ກໍ່ໝາຍຄວາມວ່າທ່ານບໍ່ແມ່ນປຸຖຸຊົນທຳມະດາອີກຕໍ່ໄປ,ທ່ານໄດ້ຖືກຍົກລະດັບເໝືອນກັນກັບນັກບວດແລ້ວ.ໃນສະໄໝກອ່ນເຂົາຮ້ອງກັນວ່າ " ການລ້າງບາບ " ຫຼື ການຖືອາຈານເປັນທີ່ເພິ່ງ.

" ທ່ານ ອານຸດຕຣາຈານ ຊີງໄຫ່ "

# ການສິດວິຊາ
# ທຳມະວິຖີແບບ ກວນຢິນ

ທ່ານອາຈານຊີງໄຫ່ຈະສິດວິຊາໃຫ້ແກ່ບຸກຄົນຜູ້ຊຶ່ງມີຄວາມຈິງໃຈທີ່ປາຖະໜາຢາກຮູ້ຈັກສັດຈະທຳ (ຄວາມຈິງ)ເຂົ້າສູ່ທຳມະແບບກວນຢິນ.ຕາມພາສາຈີນ"ກວນຢິນ"ໝາຍຄວາມວ່າການເປັ່ງແຮງຊັ່ນສະເທືອນຂອງສຽງ.ແບບດັ່ງກ່າວແມ່ນລວມທັງການນັ່ງສະມາທິເປັ່ງທັງແສງແລະສຽງພາຍໃນ.ປະສົບການພາຍໃນເຫຼົ່ານີ້ໄດ້ຮັບການບັນຍາຍໄວ້ຫລາຍຄັ້ງຫຼາຍຫົນຕິດຕໍ່ກັນມາໃນໜັງສືທຳມະຂອງສາດສະໜາຕ່າງໆຂອງໂລກຕັ້ງແຕ່ສະໄໝບູຮານມາແລ້ວ.

ຕົວຢ່າງເຊັ່ນ: **ໃນຄຳພີໄບໂບຂອງສາດສະໜາຄຣິສກໍ່ມີກ່າວໄວ້ວ່າ"ໃນຄັ້ງປະຖົມມະເລີກກໍ່ແມ່ນສຽງຂອງຄຳເວົ້າ,ແລະສຽງຂອງຄຳເວົ້າກໍ່ແມ່ນຢູ່ກັບພຣະເຈົ້າ,ແລະສຽງຂອງຄຳເວົ້າກໍ່ແມ່ນພຣະເຈົ້າ"**(ຈອນ1:1)ສຽງຂອງຄຳເວົ້ານີ້ກໍ່ແມ່ນສຽງພາຍໃນແລະມັນຍັງຖືກເອີ້ນວ່າLogos,Shabd,ເຕົ່າ,ກະແສສຽງ,ນາມ,ຫລືດົນຕີແຫ່ງແດນສະຫວັນ.

ທ່ານອາຈານຊີງໄຫ່ໄດ້ກ່າວໄວ້ວ່າ,"**ມັນສັ່ນສະເທືອນຢູ່ພາຍໃນຊີວິດທັງມວນແລະຮັກສາຄ້ຳຈຸນທັງໝົດຈັກກະວານ.ສຽງດົນຕີພາຍໃນນີ້ສາມາດຮັກສາບາດແຜທັງໝົດທຸກຢ່າງ,ສະໜອງຄວາມປາດຖະໜາທຸກຢ່າງ,ແລະດັບຄວາມກະຫາຍທັງປວງທາງໂລກ.ມັນແມ່ນພະລັງທັງປວງແລະຄວາມຮັກທັງປວງ.ເພາະວ່າເຮົາເອງກໍ່ແມ່ນຖືກສ້າງຂື້ນມາຈາກສຽງອັນນີ້,ການຕິດຕໍ່ກັບມັນຈຶ່ງນຳຄວາມສະງົບແລະຄວາມປິຕິຍິນດີມາສູ່ຫົວໃຈຂອງເຮົາ.ຫຼັງຈາກທີ່ເຮົາຟັງສຽງນີ້,ຊີວິດຂອງເຮົາຈະປ່ຽນໄປໝົດ,ການເບິ່ງໂລກພາຍນອກຂອງເຮົາຈະມີການປ່ຽນແປງໄປໃນທາງທີ່ດີຂື້ນ.**

ແສງພາຍໃນ ຫຼືແສງຂອງພຣະເຈົ້າ ກໍ່ຄືແສງ(light) ແບບດຽວກັນກັບທີ່ໄດ້ເວົ້າ ເຖິງໃນ ຄຳວ່າ " ການຮູ້ແຈ້ງ "(Enlightenment) ຄວາມເຂັ້ມຂອງແສງນີ້ສາມາດຈັດເປັນລຳດັບຈາກແສງ ທີ່ເປັ່ງປະກາຍບໍ່ເຂັ້ມຈົນຂື້ນ ໄປເຖິງແສງທີ່ ເຈີດຈ້າສະຫວ່າງສະໄຫວ ຂອງດວງອາທິດຕັ້ງຫຼາຍລ້ານດວງ ແລະຍ້ອນ ຜ່ານແສງ ແລະສຽງນີ້ແຫລະ ຈຶ່ງທຳໃຫ້ເຮົາຮູ້ຈັກກັບພຣະເຈົ້າ.

ການຖ່າຍທອດເຂົ້າສູ່ທຳມະວິຖີແບບກວນຢິນບໍ່ໄດ້ແມ່ນພິທີອັນລຶກລັບຫຼືພິທີການເຂົ້າສູ່ສາດສະໜາໃໝ່ ແຕ່ຢ່າງໃດເລີຍ.ໃນເວລາທີ່ສິດນັ້ນ,ຈະມີການສອນເປັນການສະເພາະສຳລັບການນັ່ງສະມາທິກ່ຽວກັບແສງພາຍໃນ ແລະສຽງພາຍໃນ,ແລະທ່ານອາຈານຊີງໄຫ່ຈະເປັນຜູ້ "ຖ່າຍທອດທາງຈິດ ສູ່ຈິດ" ລົດຊາດຄັ້ງແລກຂອງການຢູ່ເບື້ອງໜ້າຂອງພຣະເຈົ້າຈະໄດ້ຖືກມອບໃຫ້ໃນຄວາມງຽບ.ທ່ານອາຈານຊີງໄຫ່ບໍ່ຈຳເປັນຢູ່ບ່ອນນັ້ນດວ້ຍຕົນເອງກໍ່ໄດ້ໃນການເປີດປະຕູນີ້ໃຫ້ແກ່ທ່ານ.ການຖ່າຍທອດນີ້ເປັນສ່ວນທີ່ສຳຄັນຂອງວິທີການ.ແຕ່ສຳລັບເລື້ອງເຕັກນິກວິທີການຈະມີຜົນປະໂຫຍດໜ້ອຍ ຖ້າບໍ່ໄດ້ຮັບພອນຈາກອາຈານ.

ເນື່ອງຈາກວ່າ,ທ່ານອາດຈະໄດ້ຍິນສຽງພາຍໃນແລະໄດ້ເຫັນແສງພາຍໃນທັນທີ,ໃນຂະນະທີ່ກຳລັງຖ່າຍທອດນັ້ນ,ເຫດການນີ້ບາງຄັ້ງຈະເອີ້ນວ່າ " ວ່ອງໄວ " ຫລື " ການຮູ້ແຈ້ງໃນທັນທີ".ທ່ານອາຈານຊີງໄຫ່ຈະຮັບເອົາທຸກຄົນຈາກທຸກເງື່ອນໄຂ.ໂດຍບໍ່ເລືອກເຊື້ອຊາດສາດສະໜາໃນເວລາຖ່າຍທອດຫຼືສິດເອົາວິຊາດັ່ງກ່າວ.ທ່ານບໍ່ຈຳເປັນຕອ້ງປ່ຽນສາດສະໜາຫລືຄວາມເຊື່ອ ແລະຂະນົບທຳນຽມປະເພນີ ທ່ານຈະບໍ່ຖືກຂໍຮ້ອງໃຫ້ເຂົ້າຮ່ວມອົງການ ຈັດຕັ້ງໃດໆທັງສິ້ນ,ຫຼືໃຫ້ທຳການໃດໆທີ່ບໍ່ເມາະສົມກັບການດຳລົງຊີວິດຂອງຕົນໃນປັດຈຸບັນ.

ເຖີງຢ່າງໃດກໍ່ຕາມ,ທຸກຄົນຈະໄດ້ຮັບການຂໍຮອ້ງໃຫ້ເປັນມັງສະວິລັດ.ການໃຫ້ຄຳໝັ້ນສັນຍາວ່າຈະເປັນມັງສະວິລັດຕະຫຼອດຊີວິດ.ແມ່ນຈຳເປັນ,ກ່ອນທີ່ຈະໄດ້ຮັບການສິດເອົາວິຊາ.

**ການສິດເອົາວິຊາຈະຖືກຖ່າຍທອດໃຫ້ ໂດຍບໍ່ມີການຄິດຄ່າຫຍັງໝົດ.**

ຫລັງຈາກສິດເອົາວິຊາແລ້ວ ທຸກຄົນຈຳເປັນຕອ້ງປະຕິບັດ ການນັ່ງສະມາທິ ທຳມະວິທີແບບກວນຢິນເປັນປະຈຳທຸກໆວັນແລະຮັກສາສິນຫ້າ,ໂດຍຕະຫຼອດອີກດວ້ຍ.ສິນຫ້າຈະເປັນເຄື່ອງຊີ້ແນວທາງທີ່ຊວ່ຍໃຫ້ທຸກຄົນບໍ່ເຮັດຮ້າຍຫຼືເຮັດອັນຕະລາຍຕໍ່ຕົນເອງແລະສິ່ງມີຊີວິດອື່ນໆການບຳເພັນປະຕິບັດດັ່ງນີ້ນັ້ນຈະເຮັດໃຫ້ປະສົບການຂອງການຮູ້ແຈ້ງທີ່ໄດ້ຮັບໃນເບື້ອງຕົ້ນມີຄວາມເລິກຊຶ້ງແລະເພີ້ມທະວີຍິ່ງຂຶ້ນຢ່າງໝັ້ນຄົງແລະຈະທຳໃຫ້ຜູ້ປະຕິບັດໄດ້ບັນລຸເຖີງລະດັບທີ່ສູງສຸດຂອງການຕື່ນຂຶ້ນຫຼືໄດ້ຮັບຄວາມເປັນພຸດທະຂອງຕົນເອງໃນທີ່ສຸດ.ຫາກບໍ່ບຳເພັນປະຕິບັດທຸກໆວັນການຮູ້ແຈ້ງກໍ່ຈະຖືກລືມຫລູ້ຍໄປແລ້ວຜູ້ນັ້ນກໍ່ຈະຖືກກັບຄືນສູ່ລະດັບຂອງຈິດສຳນຶກຂອງຄົນທຳມະດາທົ່ວໄປ.

ເປົ້າໝາຍຂອງ ທ່ານອາຈານຊີງໄຫ່ ກໍ່ຄືການສອນໃຫ້ເຮົາເພີ່ງພາຕົນເອງຢ່າງພຽງພໍ.ດັ່ງນັ້ນ,ທ່ານຈຶ່ງສອນທຳມະວິທີທີ່ທຸກໆຄົນສາມາດປະຕິບັດໄດ້ໂດຍຕົນເອງ.ໂດຍປາສະຈາກຜູ້ສະນັບສະໜູນຫຼືຊັບສິນອື່ນໆ.ທ່ານບໍ່ໄດ້ຊອກຫາຜູ້ຕິດຕາມ,ຜູ້ມາເຄົາລົບບູຊາ,ຫຼືລູກສິດລູກຫາ.ທ່ານບໍ່ໄດ້ຕັ້ງອົງການຈັດຕັ້ງທີ່ຈະຕ້ອງໄດ້ຈ່າຍຄ່າສະມາຊິກ.ທ່ານຈະບໍ່ຮັບເງິນຄຳ,ການກາບໄຫວ້ບູຊາຫຼືຂອງຂວັນຕ່າງໆຈາກຜູ້ໃດທັງສີ້ນ.ດັ່ງນັ້ນ,ຈຶ່ງບໍ່ຈຳເປັນທີ່ຈະຕ້ອງມອບສິ່ງເຫຼົ່ານັ້ນໃຫ້ທ່ານ.

ທ່ານຈະຕົກລົງຮັບເອົາແຕ່ພຽງຄວາມຈິງໃຈຂອງທຸກຄົນໃນການບຳເພັນສະມາທິໃນຊີວິດປະຈຳວັນເພື່ອຄວາມກ້າວໜ້າໄປສູ່ຄວາມເປັນນັກບູນຂອງທ່ານເອງ.

# ສິນຫ້າ

1. **ລະເວັ້ນຈາກການຂ້າສັດຕັດຊີວິດ *;**

2. **ລະເວັ້ນການຂີ້ຕົວະ ຫຼືເວົ້າສິ່ງທີ່ບໍ່ມີມູນຄວາມຈິງ;**

3. **ລະເວັ້ນຈາກການລັກຊັບຂອງຄົນອື່ນ;**

4. **ລະເວັ້ນຈາກການປະພຶດຜິດໃນກາມ;**

5. **ລະເວັ້ນຈາກການດື່ມສຸລາເມໄລ ຫຼືສິ່ງເສບຕິດຕ່າງໆ**;**

* ໂດຍສະເພາະສິນຂໍ້ແລກ ແມ່ນຮຽກຮ້ອງໃຫ້ປະຕິບັດຢ່າງເຂັ້ມງວດ ສຳລັບຜູ້ເປັນນັງສະວິລັດ ຄືຍົກເວັ້ນການກິນ ຊີ້ນ,ປາ,ໄຂ່(ໄຂ່ທຸກປະເພດ ຈາກຟາມ ຫຼືບໍ່ກໍ່ຕາມ). ( ດື່ມນົມສົດ ແລະເນີຍໄດ້).

** ຂໍ້ນີ້ແມ່ນລວມທັງການຫລີກເວັ້ນເຄື່ອງດື່ມປະເພດຕ່າງໆເຊັ່ນ: ເຫຼົ້າ,ຢາເສບຕິດ,ຢາສູບ,ການພະນັນ,ຮູບໂປ້ ,ວາລະສານ ແລະຟີມທີ່ມີລັກສະນະທີ່ຮູນແຮງອື່ນໆ.